ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ເລກທີ ໔໗໐/ປພຖຂ/໐໑໔໑໔໐໑໐**

# ຖແລງການ

## ຕອບໂຕ້ທ່ານ ບົວສອນຮຽກຮ້ອງຄົນລາວຕ່າງປະເທດ

ທ່ານ ບົວສອນ ບຸບຜາວັນ ນາຍົກຣັຖມົນຕຣີ ສປປລາວ. ໄດ້ໂອ້ລົມ ກັບຄົນລາວຕ່າງປະເທດ ທີ່ມາຢ້ຽມຢາມຍາດພີ່ນ້ອງ ແລະ ທ່ຽວຊົມ ງານກິລາຊີເກມ ຄັ້ງທີ່ 25 ທີ່ລາວເປັນເຈົ້າພາບ. ມີໃຈຄວາມວ່າ:

- ພັກຣັດ ມີເປົ້າໝາຍ ພັທນາປະເທດຊາດ ໃຫ້ຫລຸດພົ້ນຈາກຄວາມຍາກຈົນ ໃນປີ 2015 ແລະພົ້ນຈາກ ການເປັນປະເທດດ້ອຍພັທນາ ໃນປີ 2020.

ແຕ່ຈະບັນລຸເປົ້າໝາຍຢ່າງແທ້ຈິງນັ້ນ, ຕ້ອງໄດ້ອາສັຍ ການປະກອບສ່ວນ ຂອງຄົນລາວທຸກຄົນຢູ່ໃນຕ່າງປະເທດ ແລະຢູ່ພາຍໃນປະເທດ.

ທ່ານ ນາຍົກ, ຍັງໄດ້ຍ້ຳຕື່ມວ່າ "ຣັຖບານລາວ ບໍ່ໄດ້ຍຶດຖື ຫລືໃຫ້ຄວາມສຳຄັນກັບບັນຫາຂໍ້ຂັດແຍ່ງ ເຣື້ອງລາວ ໃນອາດີດ ມາເປັນມາຕຖານການພັທນາ ເພື່ອ ອານາຄົດທີ່ດີຂອງປະເທດຊາດອີກແລ້ວ!".

ພວກເຮົາ ປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ, ກໍຄືປະຊາຊົນລາວທາງຊາດເຫັນວ່າ "ຖ້າພັກຣັດ ມີຄວາມຈິງໃຈ ຢາກເຫັນຄົນລາວ ທັງໃນ ແລະນອກປະເທດ ຮ່ວມຈິດຮ່ວມໃຈກັນ

ສ້າງສາພັທນາ ປະເທດຊາດ ໃຫ້ມີຄວາມຈເຣີນ ສີວິໄລ ຍິ່ງໆຂຶ້ນໄປ ຢ່າງແທ້ຈິງນັ້ນ, ພັກຣັດ ຕ້ອງຢຸດຕິ ໃຊ້ເລ້ກົນຕ່າງໆ, ຕົວະຍົວະຫລອກລວງປະຊາຊົນລາວ ແລະຊາວໂລກ ໃຫ້ເສັຽເວລາອີກຕໍ່ໄປ".

ພັກຣັດ ຕ້ອງເປີດໃຈ ໃຫ້ກວ້າງແລະມີຄວາມເປັນທັມ ແກ່ຄົນລາວທຸກທີ່ວໜ້າ ຢ່າງສມໍ່າສເມີກັນ, ໂດຍບໍ່ໄດ້ຈຳແນກວ່າ ເປັນຄົນລາວໃນ ຫລື ລາວນອກ ເພາະຈະຢູ່ໃສ ກໍແມ່ນຄົນລາວເໝືອນກັນ.

ການອອກດຳຣັດ ໃຫ້ຄົນເຊື້ອຊາດລາວ ທີ່ກັບຄືນປະເທດ ມີຖານະເປັນພົລເມືອງ ກິຕິມະສັກ... ແຕ່ບໍ່ມີສິດທິທາງການເມືອງນັ້ນ, ມັນເປັນການຈຳແນກ, ແກ້ແຄ້ນກັນ ຢ່າງຈະແຈ້ງທີ່ສຸດ. ພວກເຂົາ ໄດ້ກາຍ ເປັນພົລເມືອງ ທີ່ຖືກຕັດອິສຣະພາບໄປໃນຕົວ. ມີຖານະ ເປັນຮອງປະຊາຊົນ, ຊີວິດການເປັນຢູ່ ບໍ່ມີຄວາມປອດພັຍ ແລະບໍ່ຮັບປະກັນໃນສັງຄົມ.

ຈະແມ່ນ ກົດໝາຍ ວ່າດ້ວຍແນວລາວສ້າງຊາດ, ກົດໝາຍ ວ່າດ້ວຍການລົງທຶນ ຫລືນະໂຍບາຍ ໃຫ້ລາວນອກ ຊື້ສິດນຳໃຊ້ທີ່ດິນຕ່າງໆເຫລົ່ານີ້ ກໍລ້ວນແລ້ວ ແຕ່ເປັນກົນອຸບາຍ ຫລອກລວງ ເພື່ອ ກວາດຕ້ອນ ເອົາຄົນລາວນອກປະເທດ ເຂົ້າມາດັບງຽບເທົ່ານັ້ນເອງ.

ສ່ວນແຜນຈອບອອຍ ເອົາຄົນລາວຕ່າງປະເທດ, ໂດຍໃຫ້ ທ່ານ ທຽມ ພົມມະຈັນ ຣັຖມົນຕຣີຊ 'ວຍວ່າ ການ ກະຊວງການຕ່າງປະເທດ ເປັນປະທານ ຈັດຕັ້ງໜ່ວຍສະເພາະກິດ ອອກໄປຢູ່ຕາມ ສະຖານທູດ ແລະ ກົງສຸນຕ່າງໆນັ້ນ, ກໍຍິ່ງເປັນອຸປສັກ ໃນແຜນພັທນາຊາດລາວ ໃຫ້ຫລຸດພົ້ນ ຈາກຄວາມຍາກຈົນ ເພາະພັກຣັດ ມີ

ເປົ້າໝາຍທາງການເມືອງ ຄືຊອກແຕ່ງຕັ້ງຕົວແທນຂອງຕົນຂຶ້ນມາ ເພື່ອແອບອ້າງວ່າ ໄດ້ສ້າງ ຄວາມ ສາມະຄີປອງດອງຊາດແລ້ວ ເທົ່ານັ້ນເອງ.

ກ່ຽວກັບບັນຫານີ້, ຢູ່ກອງປະຊຸມສະພາ ຄັ້ງທີ່ 7 ຊຸດທີ 6, ບັນດາອົງການຈັດຕັ້ງສາກົນ, ບັນດານັກ ການທູດ ທີ່ໄດ້ເຂົ້າຮັບຟັງ ກໍພາກັນຫົວຂວັນ ເມື່ອເຫັນພັກຣັດ ຫລົບຫລີກ ການແກ້ໄຂບັນຫາລາວຕາມ ແນວທາງ ສັນຕິວິທີ, ຫລົບຫລີກ ການເຄົາຣົບ ຕໍ່ສິດທິເສຣີພາບ ຂອງພົລເມືອງ ດ້ວຍການ ອອກກົດໝາຍຕ່າງໆ ທີ່ເປັນເຄື່ອງມືກົ່ນແກ້ງ ປາບປາມ ແລະຈັບກຸມ.

ສນັ້ນ, ພັກຣັດ ຕ້ອງໄດ້ຢຸດຕິແຜນການ ຈັດສົ່ງ ໜ່ວຍສະເພາະກິດ ອອກໄປຊົນຂວາຍ ເອົາຄົນລາວ ນອກປະເທດ ໃຫ້ເສັຽເວລາ, ເສັຽງົບປະມານຂອງຊາດ ເພາະ ບໍ່ແມ່ນການແກ້ໄຂ ຕົ້ນຕໍຂອງບັນຫາ. ຕົ້ນຕໍ ຂອງບັນຫາ ກໍຄື: ປະຊາຊົນລາວ ຂາດສິດທິເສຣີພາບ ຢູ່ພາບໃຕ້ ອຳນາດຜເດັດການພັກດຽວນັ້ນເອງ. ເຖິງແມ່ນວ່າ ພັກຣັດ ຈະຜັນເອງ ແກ້ເອງ ດ້ວຍການ ໄປຊອກ ຈັດຕັ້ງຕົວແທນ ມາຈາກຕ່າງປະເທດ ເພື່ອເປັນ ຂໍ້ຕໍ່ລອງ ທາງການເມືອງ ທີ່ອົງການຈັດຕັ້ງສາກົນ ບີບຣັດ ໃຫ້ມີການສ້າງຄວາມສາມະຄີປອງດອງຊາດ ເກີດຂຶ້ນ ໂດຍໄວ ເພື່ອແກ້ໄຂບັນຫາ ໃຫ້ ເປັນໄປຕາມ ໂຄງການສ້າງສັນຕິພາບໂລກ ຫລາຍປານໃດກໍຕາມ, ປະຊາຊົນ ລາວ, ອົງການຈັດຕັ້ງ ສາກົນແລະທີ່ປຶກສາຕ່າງປະເທດ ກໍຮັບເອົາບໍ່ໄດ້ ເປັນເດັດຂາດ! ເພາະຕົວແທນເຫລົ່ານີ້, ເກີດມາ

ຈາກທ້ອງ ຂອງອຳນາດຜເດັດການໃນລາວ, ເປັນຕົວແທນ ທີ່ພັກຣັດສ້າງຂື້ນມາ ເພື່ອຫລອກລວງຕາໂລກ ເທົ່ານັ້ນເອງ.

ບົນຈິດໃຈ ຮັກຊາດແພງເຊື້ອ, ຮັກບ້ານເກີດເມືອງນອນຢ່າງແທ້ຈິງ, ພວກເຮົາ ຍາມໃດ ກໍຮຽກຮ້ອງ ໃຫ້ພັກຣັດ ສປປລາວ. ອອກມາໂອ້ລົມກັບພວກເຮົາ ປະຊາຊົນພັກແລະກຳລັງທັບເສຣີປະຊາທິປະໄຕລາວ ກໍຄືປະຊາຊົນລາວທັງຊາດ, ເພາະມີແຕ່ ອອກມາໂອ້ລົມກັບພວກເຮົາເທົ່ານັ້ນ, ຈິ່ງຈະແກ້ໄຂ ບັນຫາຊາດ ທີ່ມີຢູ່ ໃນປະຈຸບັນນີ້ ໃຫ້ລຸໂລ່ງໄປໄດ້ດ້ວຍດີ.

ພ້ອມດຽວກັນນີ້, ພວກເຮົາຂໍຮຽກຮ້ອງມາຍັງປະຊາຊົນຈີນ, ປະຊາຊົນ ອະເມຣິກັນ, ປະຊາຊົນ ຝຣັ່ງເສດ, ປະຊາຊົນ ໄທຍ, ປະຊາຊົນ ມາເລເຊັຽ, ປະຊາຊົນ ອິນໂດເນເຊັຽ, ປະຊາຊົນ ສິງກະໂປ, ປະຊາຊົນ ບຣູນັຍ, ປະຊາຊົນ ຍີ່ປຸ່ນ, ປະຊາຊົນ ໄຕ້ຫວັນ, ປະຊາຊົນ ກຳພູເຈັຽ ແລະປະຊາຊົນ ວຽດນາມ ທີ່ໄດ້ຮັບການພັທນາ ທາງດ້ານສິດທິມາແລ້ວ, ຈິ່ງໄດ້ຊ່ວຍກັນ ແນະນຳ ຕັກເຕືອນ ແລະບີບຮັດ ໃຫ້ຫພັກປະຊາຊົນປະຕິວັດລາວ ແລະ ຣັຖບານ ຈິ່ງໄດ້ປະຕິບັດ ຕາມແຜນສ້າງສັນຕິພາບໂລກ ພາຍໃຕ້ເງື່ອນໄຂ ອອກມາໂອ້ລົມເຈຣະຈາກັນ ທາງການເມືອງໂດຍໄວ

**ປະຊາຊົນ ມີໄຊຍ໌ ເສຣີປະຊາທິປະໄຕ ອົງອາດ ຊາດລາວ ຈົ່ງຈເຣີນ.**

**ຂໍຂອບໃຈ.**

**ສູນກາງຕາງໜ້າ**
**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**
**ຫ້ອງການປະທານພັກ**
**ອາຈານ ສົມນຶກ ຟອງສູວັນ**
**ວັນທີ ໒໑ ມົກະຣາ ໒໐໑໐.**